ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເລກທີ 1244 /ກສ

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2025

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປູກຝັງ

- ອີງຕາມ ກົດໝາຍ ວ່າດ້ວຍການປູກຝັງ ສະບັບເລກທີ 82/ສພຊ, ລົງວັນທີ 25 ມິຖຸນາ 2025;
- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025.

**ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມປູກຝັງ ແນໃສ່ຈັດຕັ້ງປະຕິບັດວຽກງານປູກຝັງ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມປູກຝັງ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກປຝ"** ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດເປັນເສນາທິການໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ, ຊຸກຍູ້ສົ່ງເສີມ ແລະ ພັດທະນາ ວຽກງານວິຊາການປູກຝັງ, ປັດໄຈການຜະລິດ, ປ້ອງກັນ ແລະ ກັກກັນພືດ, ກະສິກຳສະອາດ ແລະ ປຸງແຕ່ງພືດ ແນໃສ່ຄໍ້າປະກັນ ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ, ການຜະລິດພືດເປັນສິນຄ້າ ຕິດພັນກັບການປຸງແຕ່ງຊົມໃຊ້ພາຍໃນ ແລະ ສົ່ງອອກ ຕາມທິດກະສິກຳສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ກົມປູກຝັງ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ຄົ້ນຄວ້າ, ເຊື່ອມຊຶມ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ຊຸກຍູ້ສົ່ງເສີມການຜະລິດສະບຽງອາຫານໃຫ້ພຽງພໍ ເພື່ອຄໍ້າປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ມີຜົນຜະລິດສິດ, ມີວັດຖຸດິບປ້ອນໂຮງງານປຸງແຕ່ງ, ສະອາດ ແລະ ປອດໄພ ເພື່ອຊົມໃຊ້ພາຍໃນ ແລະ ທົດແທນການນຳເຂົ້າ;
4. ຊຸກຍູ້ສົ່ງເສີມການຜະລິດພືດເປັນສິນຄ້າ ໂດຍມີການກຳນົດເປັນໂຄງການ, ກຳນົດເຂດການຜະລິດຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ຕາມທ່າແຮງທີ່ໄດ້ປຽບຂອງທ້ອງຖິ່ນ ແລະ ເຂດແຄວ້ນ, ຊຸກຍູ້ການພັດທະນາ ຫົວໜ່ວຍທຸລະກິດ, ຜູ້ປະກອບການ, ຫັນເປັນຟາມ, ກຸ່ມ, ຄອບຄົວຕົວແບບ, ໃຫ້ສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ ສອດຄ່ອງກັບມາດຕະຖານສຸຂານາໄມພືດ ແລະ ເງື່ອນໄຂຂອງປະເທດຄູ່ຄ້າ;
5. ພັດທະນາ, ຄົ້ນຄວ້າ, ສັງລວມມາດຕະຖານເງື່ອນໄຂ, ກຳນົດມາດຕະຖານລວມດ້ານເຕັກນິກ ແລະ ຄຸນນະພາບ ກ່ຽວກັບ ພືດ ແລະ ຜະລິດຕະພັນພືດ ທີ່ມີສັນຍາ ວ່າດ້ວຍສຸຂານາໄມ ແລະ ສຸຂານາໄມພືດ (SPS), ປັດໄຈການຜະລິດ, ໂຮງງານຜະລິດຝຸ່ນ, ໂຮງງານປຸງແຕ່ງຜະລິດຕະພັນພືດສົ່ງອອກ, ກົນຈັກ ແລະ ເຄື່ອງມືອຸປະກອນ ຮັບໃຊ້ການປູກຝັງສ້າງ ແລະ ປັບປຸງພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນ ຂະບວນການວິໄຈທົດລອງຢັ້ງຢືນມາດຕະຖານສິນຄ້າກະສິກຳ, ປັດໄຈການຜະລິດຮັບໃຊ້ພາຍໃນ, ການນຳເຂົ້າ ແລະ ສຳລັບ ສົ່ງອອກພືດ ແລະ ຜະລິດຕະພັນພືດ;
6. ຄົ້ນຄວ້າ, ສ້າງຮ່າງຍຸດທະສາດ ແລະ ນະໂຍບາຍກ່ຽວກັບວຽກງານປູກຝັງ ເພື່ອສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮັບຮອງ; ສ້າງແຜນງານ, ແຜນການ ແລະ ໂຄງການຜະລິດພືດເປັນສິນຄ້າ, ໂຄງການຜະລິດພືດຕິດພັນກັບການປຸງແຕ່ງເປັນສິນຄ້າ ໃນແຕ່ລະຊະນິດພືດ ເພື່ອຮັບໃຊ້ພາຍໃນທົດແທນການນຳເຂົ້າ ແລະ ສົ່ງອອກ ເປັນຕົ້ນແມ່ນພືດທີ່ມີທ່າແຮງ, ພືດທີ່ໄດ້ມີສັນຍາກັບປະເທດຄູ່ຄ້າແລ້ວ ເພື່ອສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາອະນຸມັດ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
7. ສຶກສາ ແລະ ຄົ້ນຄວ້າວິທີການ, ຂັ້ນຕອນ, ມາດຕະຖານ, ລະບຽບການ, ວິເຄາະວິໄຈຕະຫຼາດ ຂອງບັນດາປະເທດທີ່ມີຄວາມຕ້ອງການສິນຄ້າກະສິກຳ ຂອງ ສປປ ລາວ ເພື່ອກຳນົດຊະນິດສິນຄ້າ; ເຈລະຈາເຕັກນິກເປີດຕະຫຼາດສຳລັບນຳເຂົ້າ, ສົ່ງຜ່ານ, ສົ່ງອອກ, ສົ່ງອອກຕໍ່ ພືດ ແລະ ຜະລິດ ຕະພັນພືດກັບປະເທດຄູ່ຄ້າ ຕາມມາດຕະຖານສາກົນ ທີ່ ສປປ ລາວ ເປັນພາຄີຄຸ້ມຄອງ, ກວດກາ, ຢັ້ງຢືນ ກະສິກຳສະອາດ, ສຸຂານາໄມພືດ ໃນການນຳເຂົ້າ, ສົ່ງຜ່ານ, ສົ່ງອອກ, ສົ່ງອອກຕໍ່ ຜະລິດຕະພັນ ກະສິກຳ, ຄຸ້ມຄອງການນຳເຂົ້າ, ສົ່ງອອກປັດໄຈການຜະລິດ ເປັນຕົ້ນ ຝຸ່ນ ຢາປາບສັດຕູພືດ, ເຄມີກະສິກຳ, ແນວພັນພືດ, ກົນຈັກ ແລະ

ເຄື່ອງມືອຸປະກອນ ຮັບໃຊ້ການປູກຝັງ, ລະບົບບຳບັດ ແລະ ສາງເກັບມ້ຽນ, ການຈັດການຜົນຜະລິດຫຼັງການເກັບກ່ຽວ ແລະ ຕະຫຼາດພືດ-ຜະລິດຕະພັນພືດ ຕາມກົດໝາຍ ແລະ ລະບຽບການ;

8. ຄຸ້ມຄອງ, ກວດກາ ມາດຕະຖານການປຸງແຕ່ງທີ່ດີ, ສຸຂານາໄມ ແລະ ຄວາມປອດໄພໃນການປຸງແຕ່ງ, ການຫຸ້ມຫໍ່ ແລະ ອື່ນໆ ຢູ່ໃນໂຮງງານປຸງແຕ່ງ ແລະ ລະບົບໂລຈິສຕິກໃນຂົງເຂດກະສິກຳ ໃຫ້ເປັນລະບົບຕ່ອງໂສ້ ເພື່ອກຳນົດແຜນການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ຢ່າງກົມກຽວ;
9. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາໂຮງສີເຂົ້າ, ໂຮງງານປຸງແຕ່ງແປ້ງມັນຕົ້ນ, ໂຮງງານປຸງແຕ່ງອ້ອຍ, ໂຮງງານຜະລິດຝຸ່ນ, ຢາປາບສັດຕູພືດ ແລະ ໂຮງງານປຸງແຕ່ງພືດ, ຜະລິດຕະພັນພືດອື່ນກົນຈັກ ແລະ ເຄື່ອງມືຮັບໃຊ້ການປູກຝັງ, ຄົ້ນຄວ້າ, ປະກອບຄຳເຫັນ ແລະ ນຳສະເໜີ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການປູກຝັງ ເປັນຕົ້ນ ການຜະລິດພືດດ້ານສະບຽງອາຫານ ແລະ ຜະລິດພືດເປັນສິນຄ້າ ແລະ ທຸລະກິດອື່ນ ກ່ຽວກັບການປູກຝັງ;
10. ຄົ້ນຄວ້າ, ຄຸ້ມຄອງ, ນຳສະເໜີ, ຂຶ້ນບັນຊີ ພືດ, ແນວພັນພືດ, ສັດຕູພືດ, ຢາປາບສັດຕູພືດ ຂຶ້ນບັນຊີອື່ນຂອງ ສປປ ລາວ;
11. ຄົ້ນຄວ້າ, ວິໄຈ ແລະ ຂຶ້ນທະບຽນ ຝຸ່ນ, ສານກະຕຸ້ນການຈະເລີນເຕີບໂຕຂອງພືດ, ທາດອາຫານເສີມພືດ, ສານປັບປຸງດິນ, ແນວພັນພືດ, ການຕັດແຕ່ງພັນທຸກຳ (GMOs) ແລະ ສານເຄມີອື່ນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
12. ຄົ້ນຄວ້າ, ວິໄຈ ແລະ ກຳນົດ ລະດັບສານເຄມີຕົກຄ້າງ, ສານພິດຕົກຄ້າງສູງສຸດ (MRLs) ຂອງພືດ ແລະ ຜະລິດຕະພັນພືດ ໃຫ້ໄດ້ຕາມມາດຕະຖານພາກພື້ນ ແລະ ສາກົນ;ຄົ້ນຄວ້າ ແລະ ນຳສະເໜີ ອອກ ຫຼື ຖອນໃບອະນຸຍາດຂຶ້ນທະບຽນຜະລິດຕະພັນ, ໃບຢັ້ງຢືນການຜະລິດທີ່ດີ (GMP), ລະບົບວິເຄາະ ແລະ ຄວບຄຸມຈຸດອັນຕະລາຍ (HACCP), ໃບຢັ້ງຢືນການຕັດແຕ່ງພັນທຸກຳ (GMOs), ຢັ້ງຢືນລະບົບການກວດກາຄຸນນະພາບ ແລະ ການປະຕິບັດທີ່ດີສຳລັບຫ້ອງວິໄຈ (Good Laboratory Practices-GLP) ໃຫ້ແກ່ຜູ້ປະກອບການ;
13. ສຳຫຼວດ, ຕິດຕາມ-ເຝົ້າລະວັງ, ພະຍາກອນ, ປ້ອງກັນ-ຄວບຄຸມ, ທົດສອບ, ວິໄຈສັດຕູພືດ, ປະເມີນຄວາມສ່ຽງສັດຕູພືດ; ພັດທະນາຕາໜ່າງ, ໃຫ້ການບໍລິການ, ຄຳປຶກສາ ວຽກງານປ້ອງກັນພືດ ແລະ ອອກໃບອະນຸ ຍາດດຳເນີນທຸລະກິດຄູ້ມືກັກພືດ;
14. ວິໄຈ, ທົດສອບ, ກວດກາ ສານເຄມີຕົກຄ້າງ, ຢາປາບສັດຕູພືດ, ເຊື້ອຈຸລິນຊີ ແລະ ສິ່ງປົນເປື້ອນໃນພືດຜະລິດຕະພັນພືດ ແລະ ປັດໄຈການຜະລິດ ໃຫ້ໄດ້ມາດຕະຖານ ແລະ ສອດຄ່ອງກັບມາດຕະຖານຂອງພາກພື້ນ ແລະ ສາກົນ;
15. ຄຸ້ມຄອງ, ພັດທະນາມາດຕະຖານ, ການກວດກາ, ຢັ້ງຢືນ ແລະ ຮັບຮອງ ລະບົບການຜະລິດກະສິກຳອິນຊີ ກະສິກຳທີ່ດີ, ມາດຕະຖານການຜະລິດພືດ, ມາດຕະຖານສິນຄ້າພືດ ແລະ ມາດຕະຖານ ອື່ນໆ ໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
16. ປັບປຸງ, ຍົກລະດັບສູນກະສິກຳສະອາດ ໃຫ້ເປັນສູນລະດັບຊາດ, ພັດທະນາຫຼັກສູດ ແລະ ຄູ່ມືຝຶກອົບຮົມມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ ແລະ ມາດຕະຖານອື່ນ, ວິທະຍາການຫຼັງການເກັບກ່ຽວ ແລະ ສ້າງຕາໜ່າງກະສິກຳສະອາດ ລົງສູ່ພື້ນຖານການຜະລິດໃນຂອບເຂດທົ່ວປະເທດ;

17. ໂຄສະນາ, ເຜີຍແຜ່ ແລະ ການວາງສະແດງພືດ, ຜະລິດຕະພັນກະສິກໍາ ຂອງບັນດາຊາວກະສິກອນ, ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ; ສ້າງລະບຽບການຄຸ້ມຄອງຕະຫຼາດກະສິກໍາ ແລະ ຕ່ອງໂສ້ສ້າງມູນຄ່າກະສິກໍາ;

18. ພັດທະນາ, ວິເຄາະວິໄຈ ແລະ ສ້າງຖານຂໍ້ມູນສະຖິຕິການຜະລິດພືດ ໃຫ້ສາມາດລາຍງານຂໍ້ມູນຕົວຈິງໄດ້ປະຈໍາອາທິດ, ປະຈໍາເດືອນ, 3 ເດືອນ 6 ເດືອນ, ປະຈໍາປີ ແລະ ແຕ່ລະໄລຍະ;

19. ວາງແຜນການຜະລິດພືດ, ເຜີຍແຜ່ສະຖິຕິ, ຂໍ້ມູນຂ່າວສານ, ການສື່ສານດ້ານປູກຝັງ ໃຫ້ເປັນລະບົບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນສະພາບການ ໂດຍການນໍາໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ສາມາດເຊື່ອມໂຍງທັງພາຍໃນ ແລະ ສາກົນ;

20. ຂຶ້ນແຜນງົບປະມານໂຄງການແຊກຄຸມຂອງລັດ, ໂຄງການຊ່ວຍເຫຼືອ ແລະ ທຶນກູ້ຢືມຕ່າງໆ, ສັງລວມວຽກງານຮ່ວມມືພາຍໃນ ແລະ ຕ່າງປະເທດ, ພ້ອມທັງ ຊຸກຍູ້, ຕິດຕາມ, ປະເມີນຜົນ, ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງກົມປູກຝັງ ຕາມທິດທັນເປັນທັນສະໄໝໃນແຕ່ລະໄລຍະ;

21. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານປູກຝັງ ໃຫ້ໄປຕາມວຽກຈຸດສຸມຂອງກະຊວງ, ວຽກຈຸດສຸມຂອງລັດຖະບານໃນແຕ່ລະໄລຍະ ທັງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ; ມີການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ໄດ້ຜົນສໍາເລັດເປັນຢ່າງດີ;

22. ຄົ້ນຄວ້າປັບປຸງບັນດານິຕິກໍາ, ກົນໄກ, ລະບຽບການ, ຂັ້ນຂອດ ແລະ ສິ່ງກີດຂວາງ ທີ່ເປັນອຸປະສັກ ແກ່ການດຶງດູດການລົງທຶນ, ເຄື່ອນໄຫວດໍາເນີນທຸລະກິດ, ການຜະລິດຂອງບັນດາບໍລິສັດ, ຜູ້ປະກອບການ, ຫົວໜ່ວຍການຜະລິດ, ຟາມ, ຄອບຄົວຕົວແບບ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບ;

23. ຄົ້ນຄວ້າ ແລະ ປະກອບຄໍາເຫັນ, ເອື້ອອໍານວຍຄວາມສະດວກ ໃຫ້ແກ່ການລົງທຶນພາຍໃນ ແລະ ຕ່າງປະເທດ ລວມທັງການສ້າງຕັ້ງ ແລະ ດໍາເນີນທຸລະກິດກ່ຽວກັບການປູກພືດ;

24. ຄົ້ນຄວ້າ, ນໍາສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກໍານົດຕໍາແໜ່ງງານ ໃຫ້ຄົບຖ້ວນ, ຄຸ້ມຄອງພະນັກງານ-ລັດຖະກອນ ແລະ ສ້າງແຜນການບໍາລຸງກໍ່ສ້າງພະນັກງານ-ລັດຖະກອນຂອງຕົນ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ ໂດຍປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ໄດ້ກໍານົດໄວ້ ພ້ອມທັງປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງບໍລິຫານຂອງກົມໃຫ້ມີປະສິດທິພາບ;

25. ປະກອບສ່ວນເຂົ້າໃນການພັດທະນາບັນດາວິທະຍາໄລ ທີ່ຂຶ້ນກັບກະຊວງກະສິກໍາ ແລະ ສິ່ງແວດລ້ອມໃຫ້ມີຄວາມເຂັ້ມແຂງ; ທັນກິດຈະກໍາໂຄງການ, ງົບປະມານ, ເຕັກນິກວິຊາການ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ລົງສູ່ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະ ກອບສ່ວນສ້າງສູນ, ສະຖານີດັ່ງກ່າວໃຫ້ມີຄວາມເຂັ້ມແຂງ;

26. ສັງລວມ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ປະຈໍາປີ, ກາງສະໄໝ ແລະ 5 ປີ ຂອງກົມ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;

27. ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນນິຕິກໍາອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນໍາ.

ມາດຕາ 4 ຂອບເຂດສິດ.

ກົມປູກຝັງ ມີສິດ ດັ່ງນີ້:

1. ນຳສະເໜີຮ່າງຍຸດທະສາດ, ແຜນງານ, ແຜນການ, ໂຄງການຈັດຕັ້ງປະຕິບັດວາລະແຫ່ງຊາດ ຂອງກົມ ແລະ ຂະແໜງການ; ຄົ້ນຄວ້າກຳນົດ ນະໂຍບາຍ, ມາດຕະການໃນການສົ່ງເສີມການຜະລິດພາຍໃນ ແລະ ສົ່ງອອກ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາອະນຸມັດ;
2. ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ຄູ່ມືວິຊາການ ແລະ ລະບຽບການ ກ່ຽວກັບວຽກງານປູກຝັງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງກວດກາ, ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ຄຸ້ມຄອງດ້ານເຕັກນິກ, ວິຊາການ ຕາມການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດຕາມສາຍຕັ້ງ ໃນການຕົກລົງບັນຫາຢ່າງລະອຽດ, ຈະແຈ້ງ ຕາມກົດໝາຍ ແລະ ລະບຽບການ ທີ່ວາງອອກ;
4. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ແລະ ໃບທະບຽນວິຊາການ ດ້ານການປູກຝັງ; ອະນຸຍາດນຳເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ, ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ;
5. ສະເໜີລັດຖະມົນຕີຂໍອະນຸມັດສ້າງຕັ້ງ ໂຮງງານປຸງແຕ່ງພືດ, ໂຮງງານຝຸ່ນ, ໂຮງງານຢາປາບສັດຕູພືດ ແລະ ອື່ນໆ ທີ່ກ່ຽວຂ້ອງ;
6. ຢັ້ງຢືນ, ອອກອະນຸຍາດນຳເຂົ້າພືດ ແລະ ຜະລິດຕະພັນພືດ, ປັດໄຈການຜະລິດ ເປັນຕົ້ນ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ, ອະນຸຍາດການນຳເຂົ້າພາຫະນະ, ກົນຈັກກະສິກຳ ແລະ ເຄື່ອງມືອຸປະກອນຮັບໃຊ້ວຽກງານການປູກຝັງ;
7. ຕິດຕາມ, ກວດກາ ການນຳໃຊ້, ການນຳເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ປັດໄຈການຜະລິດ (ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ), ພາຫະນະ, ກົນຈັກກະສິກຳ ແລະ ເຄື່ອງມືອຸປະກອນຮັບໃຊ້ວຽກງານການປູກຝັງ ໃນຂອບເຂດທົ່ວປະເທດ;
8. ນຳສະເໜີການນຳກະຊວງ ໃນການກຳນົດດ່ານກັກກັນພືດສາກົນ ແຕ່ງຕັ້ງ, ຍົກຍ້າຍ, ສັບຊ້ອນ ເຈົ້າໜ້າທີ່ກັກກັນພືດ ແລະ ເຄື່ອງມືອຸປະກອນທີ່ຈຳເປັນ ທີ່ສາມາດສະໜອງການຈັດຕັ້ງປະຕິບັດ ພ້ອມທັງກຳນົດເງື່ອນໄຂ ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ໃນການນຳເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານພືດຜະລິດຕະພັນພືດ ແລະ ປັດໄຈການຜະລິດ ຕາມລະບຽບຫຼັກການ;
9. ກຳນົດມາດຕະຖານ ໂຮງງານປຸງແຕ່ງ ພືດ ແລະ ຜະລິດຕະພັນພືດ, ໂຮງງານຜະລິດຝຸ່ນ, ໂຮງງານຜະລິດຢາປາບສັດຕູພືດ, ເຄື່ອງມື ແລະ ກົນຈັກກະສິກຳ ຕາມລະບຽບກົດໝາຍທີ່ກຳນົດໄວ້;
10. ຄົ້ນຄວ້າ ແລະ ປະກອບຄຳເຫັນ ທາງດ້ານວິຊາການປູກຝັງ, ອຳນວຍຄວາມສະດວກໃນການພິຈາລະນາຄວາມເປັນໄປໄດ້, ອອກໃບຮັບຮອງ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດໃນວຽກງານປູກຝັງໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ໃນແຕ່ລະໄລຍະ;
11. ກວດກາ, ຮັບຮອງ ແລະ ຢັ້ງຢືນຄວາມປອດໄພທາງດ້ານອາຫານກ່ຽວກັບພືດ, ຜົນຜະລິດພືດ, ຜະລິດຕະພັນພືດ ແລະ ລະບົບການຜະລິດ ຕາມມາດຕະຖານກະສິກຳອິນຊີ, ກະສິກຳທີ່ດີ, ມາດຕະຖານຖິ່ນກຳເນີດ, ມາດຕະຖານການຜະລິດກະສິກຳທີ່ປອດໄພ ແລະ ມາດຕະຖານອື່ນໆ;
12. ຄົ້ນຄວ້າ ຄຳສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງ ທີ່ກ່ຽວຂ້ອງກັບວຽກງານປູກຝັງ ພ້ອມທັງນຳສະເໜີຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາ;

13. ລົງນາມບົດບັນທຶກຄວາມເຂົ້າໃຈ, ອານຸສັນຍາ ດ້ານເຕັກນິກວິຊາການ ແລະ ເຂົ້າຮ່ວມກອງປະຊຸມ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;
14. ຄົ້ນຄວ້າ ແລະ ນຳສະເໜີປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ, ການກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ, ຈັດວາງ, ແຕ່ງຕັ້ງ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນທີ່ວກົມປູກຝັງ ຕາມການແບ່ງຂັ້ນຄຸ້ມຄອງ, ກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ຕາມທິດກະທັດຣັດເຂັ້ມແຂງ ແລະ ມີປະ ສິດທິພາບ;
15. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງສິນຄ້າກະສິກຳ ແລະ ກົມຈັກກະສິກຳ, ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ-ຮາກຖານ, ເຂົ້າຮ່ວມການປະຊຸມແລກປ່ຽນບົດຮຽນ ແລະ ການເຈລະຈາ ກ່ຽວກັບວຽກງານປູກຝັງກັບຕ່າງປະເທດ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໃນລະບຽບການທີ່ກ່ຽວຂ້ອງ;
16. ພົວພັນ, ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງອ້ອມຂ້າງກະຊວງ ແລະ ຂະແໜງສາຍຕັ້ງຂອງຕົນ ຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານປູກຝັງ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້;
17. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົມປູກຝັງ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກສັງລວມ;
2. ພະແນກແຜນການ ແລະ ການຮ່ວມມື;
3. ພະແນກຄຸ້ມຄອງການປູກຝັງ;
4. ພະແນກລະບຽບການ ແລະ ຂຶ້ນທະບຽນປັດໄຈການຜະລິດ;
5. ພະແນກກັກກັນພືດ;
6. ພະແນກມາດຕະຖານ ແລະ ການຢັ້ງຢືນ;
7. ພະແນກຄຸ້ມຄອງການປຸງແຕ່ງພືດ;
8. ສູນປ້ອງກັນພືດ;
9. ສູນກະສິກຳສະອາດ.

### ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ກົມປູກຝັງ ມີໂຄງປະກອບດ້ານບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານ ຂອງຕົນ.

ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດໜຶ່ງ ຮັກສາການແທນ.

2. ຮອງຫົວໜ້າກົມຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ;

   ຮອງຫົວໜ້າກົມ ຜູ້ຮັກສານການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າພະແນກ ແລະ ທຽບເທົ່າ, ຮອງຫົວໜ້າພະແນກ ແລະ ທຽບເທົ່າ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບ ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງບັນດາພະແນກ ແລະ ສູນ

### ມາດຕາ 7 ໜ້າທີ່ ຂອງພະແນກສັງລວມ

ພະແນກ ສັງລວມ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ນຳສະເໜີ ພາລະບົດບາດ, ກຳນົດແຜນກໍ່ສ້າງບຸກຄະລາກອນ, ຕຳແໜ່ງງານ ແລະ ຕຳແໜ່ງບໍລິຫານ ທີ່ວຂະແໜງການປູກຝັງ;
2. ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນພະນັກງານ-ລັດຖະກອນ, ອາສາສະໝັກ ແລະ ຊ່ຽວຊານ ພາຍໃນ ແລະ ຕ່າງປະເທດ ພ້ອມທັງຄົ້ນຄວ້າ ແລະ ນຳສະເໜີ ການປະຕິບັດນະໂຍບາຍເລື່ອນຊັ້ນ-ຂັ້ນເງິນເດືອນ ເລື່ອນຕຳແໜ່ງ, ຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກົມ ຕາມກົດໝາຍ ແລະ ລະບຽບການ;
3. ຄົ້ນຄວ້າ, ສັງລວມ, ຕິດຕາມ, ກວດກາ ແລະ ຄຸ້ມຄອງການເງິນ, ການບັນຊີ, ວັດຖຸ-ຊັບສິນຂອງລັດ ງົບປະມານລົງທຶນຂອງລັດ, ທຶນຊ່ວຍເຫຼືອ ແລະ ທຶນກູ້ຢືມ ພ້ອມທັງສ້າງ ແລະ ປັບປຸງຖານຂໍ້ມູນວັດຖຸ-ຊັບສິນຂອງລັດ ທີ່ຂຶ້ນກັບກົມປູກຝັງ;
4. ຄົ້ນຄວ້າ-ສັງລວມ, ກັ່ນກອງ ແລະ ກວດກາ ຄວາມຖືກຕ້ອງຂອງຂໍ້ມູນ ພ້ອມທັງສັງລວມຫຍໍ້ ແລະ ໃຫ້ຄຳເຫັນເພີ່ມເຕີມ ຕໍ່ບັນດາບົດລາຍງານ, ບົດປະກອບຄຳເຫັນ ຫຼື ຄຳສະເໜີຕ່າງໆ ຂອງພະແນກ ແລະ ທຽບເທົ່າ ເພື່ອລາຍງານ ຂໍທິດຊີ້ນຳ ຈາກຄະນະກົມ;
5. ຄົ້ນຄວ້າ, ສັງລວມ ເອກະສານຂາເຂົ້າ-ຂາອອກ, ກະກຽມບົດບັນທຶກ, ບົດລາຍງານ, ບົດຄວາມ, ບົດປະກອບຄຳເຫັນ, ບົດໂອ້ລົມ ແລະ ການພົບປະອື່ນໆ ໂດຍປະສານກັບບັນດາພະແນກ ແລະ ທຽບເທົ່າ ໃນການກະກຽມເອກະສານ, ພິທີການ ຈັດກອງປະຊຸມ ແລະ ການພົບປະຂອງການນຳຂັ້ນກົມ;
6. ປະສານສົມທົບກັບພະແນກ, ສູນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ-ສັງລວມ, ວິເຄາະ-ວິໄຈ ຕີລາຄາ ສະພາບການເຄື່ອນໄຫວວຽກງານ ປະຈຳເດືອນຂອງກົມປູກຝັງ.
7. ປະສານສົມທົບ ກັບ ພະແນກ, ສູນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກະກຽມເນື້ອໃນກອງປະຊຸມ ຄະນະກົມ, ກອງປະຊຸມສ່ອງແສງກົມປະຈຳເດືອນ ແລະ ກອງປະຊຸມອື່ນ ພ້ອມທັງບັນທຶກ ແລະ ແຈ້ງຜົນກອງປະຊຸມໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ຈັດຕັ້ງປະຕິບັດ.

8. ຊຸກຍູ້, ສົ່ງເສີມວຽກງານບົດບາດຍິງ-ຊາຍ ແລະ ພັດທະນາຄວາມກ້າວໜ້າ ຂອງແມ່ຍິງ ແມ່-ເດັກ ຂອງກົມປູກຝັງ;
9. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
10. ຕິດຕາມ ແລະ ກວດກາ ການນຳໃຊ້, ການສ້ອມແປງ, ການບຳລຸງຮັກສາ, ການກໍ່ສ້າງ, ການຈັດຊື້ ແລະ ການສຳລະສະສາງ ພາຫານະ, ເຄື່ອງໃຊ້ໄຟຟ້າ, ເຄື່ອງກົນຈັກ, ຕຶກອາຄານ ແລະ ວັດຖຸອຸປະກອນຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກົມປູກຝັງ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກແຜນການ ແລະ ການຮ່ວມມື**

ພະແນກແຜນການ ແລະ ການຮ່ວມມື ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງຮ່າງຍຸດທະສາດ, ແຜນການ ຂອງຂະແໜງການປູກຝັງ ເພື່ອສະເໜີກົມ ພິຈາລະນາ, ສ້າງແຜນງານ ແລະ ໂຄງການຜະລິດພືດເປັນສິນຄ້າ, ໂຄງການຜະລິດພືດຕິດພັນກັບການປຸງແຕ່ງເປັນສິນຄ້າໃນແຕ່ລະຊະນິດພືດ ເພື່ອຮັບໃຊ້ພາຍໃນທົດແທນການນຳເຂົ້າ ແລະ ສົ່ງອອກ ເປັນຕົ້ນແມ່ນພືດທີ່ມີທ່າແຮງ, ພືດທີ່ໄດ້ມີສັນຍາກັບປະເທດຄູ່ຄ້າແລ້ວ ເພື່ອສະເໜີກົມ ພິຈາລະນາ ພ້ອມທັງຄຸ້ມຄອງ, ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ສ້າງແຜນການຜະລິດພືດສະບຽງອາຫານ ແລະ ການຜະລິດພືດສິນຄ້າ ຮ່ວມກັບຂະແໜງປູກຝັງ ແລະ ຂະແໜງການອື່ນໆ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ບັນດາແຂວງ ໃນຂອບເຂດທົ່ວປະເທດ;
3. ຄົ້ນຄວ້າກຳນົດລາຍການ ແລະ ບັນດາມາດຕະການສົ່ງເສີມການຜະລິດສິນຄ້າພືດ ຮັບໃຊ້ພາຍໃນ ທົດແທນການນຳເຂົ້າ ເພື່ອປົກປ້ອງຜູ້ຜະລິດພາຍໃນ ພ້ອມທັງວາງແຜນດຸນດ່ຽງການຜະລິດພາຍໃນ ແລະ ການນຳເຂົ້າສິນຄ້າກະສິກຳ (ພືດ);
4. ຊຸກຍູ້, ຕິດຕາມ ສະພາບການຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າໃນແຕ່ລະລະດູການ ຕາມທ່າແຮງຄວາມອາດສາມາດບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ
5. ສັງລວມ, ວິເຄາະ, ວິໄຈ ແລະ ຊຸກຍູ້ ຕິດຕາມ ສະພາບການຈັດຕັ້ງແຜນການຜະລິດພືດສະບຽງອາຫານ ແລະ ຜະລິດພືດສິນຄ້າ ໃນຂອບເຂດທົ່ວປະເທດ ໃນແຕ່ລະໄລຍະ ທີ່ຕິດພັນກັບອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP);
6. ພັດທະນາລະບົບເຕັກໂນໂລຊີຖານຂໍ້ມູນຂ່າວສານ, ຄຸ້ມຄອງວຽກງານສະຖິຕິດ້ານປູກຝັງ, ແຜນການຊຸກຍູ້ຕິດຕາມ ສະພາບການການຜະລິດພືດສະບຽງອາຫານ ແລະ ຜະລິດພືດສິນຄ້າ, ການຕະຫຼາດ, ການສົ່ງອອກພືດ ແລະ ຜະລິດຕະພັນພືດ ພ້ອມທັງສ້າງຖານຂໍ້ມູນການຜະລິດ;
7. ສຶກສາ ຄົ້ນຄວ້າ ຊອກຂໍ້ມູນ, ວິທີການ, ຂັ້ນຕອນ, ມາດຕະການ, ລະບຽບການ, ວິເຄາະວິໄຈ ສະພາບການຜະລິດ ຕິດພັນກັບຄວາມຕ້ອງການ ຂອງຕະຫຼາດພາຍໃນ ແລະ ຕະຫຼາດຕ່າງປະເທດ, ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ເພື່ອພັດທະນາ ແລະ ເຜີຍແຜ່ສະຖິຕິຂໍ້ມູນຂ່າວສານ ຂອງຂະແໜງການປູກຝັງໃຫ້ເປັນລະບົບ, ສາມາດເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອຮັບໃຊ້ການພັດທະນາວຽກງານຂະແໜງການປູກຝັງ;

8. ພົວພັນຮ່ວມມື, ຂົນຂວາຍ, ຍາດແຍ່ງການຊ່ວຍເຫຼືອ ແລະ ການລົງທຶນຈາກພາຍໃນ, ຕ່າງປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບການກຳນົດໄວ້ ເພື່ອພັດທະນາຂະແໜງການປູກຝັງ ແຕ່ສູນກາງຮອດທ້ອງຖິ່ນ ພ້ອມທັງປະຕິບັດພັນທະຕໍ່ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ ຢ່າງຕັ້ງໜ້າ;
9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ແລະ ສ້າງແຜນຄວາມຕ້ອງການງົບປະມານໂຄງການລົງທຶນຂອງລັດ, ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແລະ ກູ້ຢືມຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ, ການຮ່ວມມືສອງຝ່າຍ-ຫຼາຍຝ່າຍ ເພື່ອຍາດແຍ່ງການຊ່ວຍເຫຼືອເຂົ້າໃນການພັດທະນາຂອງຂະແໜງການປູກຝັງ ໃຫ້ເຂັ້ມແຂງ;
10. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການແຊກຄຸມຂອງລັດ; ໂຄງການຮ່ວມມືກັບຕ່າງ ປະເທດ ແລະ ບັນດາໂຄງການທີ່ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU, MOD, MOA, LOA) ຮ່ວມມືກັບອົງການຈັດຕັ້ງສາກົນ ແລະ ຜູ້ປະກອບການ ພາຍໃຕ້ຄວາມຮັບຜິດຊອບຂອງກົມປູກຝັງ ເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ກົດໝາຍ ແລະ ລະ ບຽບການ ວາງອອກໃນແຕ່ລະໄລຍະ;
11. ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມ ກ່ຽວກັບວຽກງານຂໍ້ມູນຂ່າວສານ ແລະ ການຕະຫຼາດ ໂດຍການຫັນເປັນທັນສະໄໝ ໃນການເກັບກຳຂໍ້ມູນ, ສ້າງຖານຂໍ້ມູນ, ການຕິດຕາມ, ການປະເມີນຜົນ ແລະ ການລາຍງານ;
12. ເປັນເສນາທິການໃຫ້ກົມ ໃນການສັງລວມ, ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວາລະແຫ່ງຊາດທີ່ກ່ຽວຂ້ອງ ກັບວຽກງານຂອງຂະແໜງການປູກຝັງ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານ ຂອງກົມປູກຝັງ ປະຈຳເດືອນ, 3 ເດືອນ, 6 ເດືອນ,ປະຈຳປີ, ກາງສະໄໝ ແລະ 5 ປີ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງພະແນກຄຸ້ມຄອງການປູກຝັງ**

ພະແນກຄຸ້ມຄອງການປູກຝັງ ມີໜ້າທີ່ ດັ່ງນີ້:

1. ສ້າງ ແລະ ປັບປຸງນິຕິກຳ, ຄູ່ມື, ບົດແນະນຳ ດ້ານວິຊາການ ກ່ຽວກັບ ການຄຸ້ມຄອງການລົງທຶນດ້ານການປູກຝັງ, ການກວດກາຍັ້ງຢືນຄຸນນະພາບແນວພັນ ແລະ ເມັດພັນພືດ ເພື່ອເປັນເຄື່ອງມື ໃຫ້ແກ່ພະນັກງານ ຢູ່ຂະແໜງສາຍຕັ້ງຂັ້ນທ້ອງຖິ່ນ ແລະ ບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ ໃນຂອບເຂດທົ່ວປະເທດ;
2. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ນຳສະເໜີ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການປູກຝັງເປັນຕົ້ນ ການຜະລິດພືດດ້ານສະບຽງອາຫານ ແລະ ຜະລິດພືດເປັນສິນຄ້າ ແລະ ທຸລະກິດອື່ນ ກ່ຽວກັບການປູກຝັງ;
3. ຄົ້ນຄວ້າ, ສຶກສາ, ວິໄຈລະບົບເສດຖະກິດ, ກຳນົດໝາຍເຕັກນິກ, ການຜະລິດເລີ່ມແຕ່ການຜະລິດລະດັບຟາມ, ການປຸງແຕ່ງພືດເບື້ອງຕົ້ນ, ການຂົນສົ່ງ, ການຕະຫຼາດ; ວິເຄາະຕົ້ນທຶນການຜະລິດພືດ ແລະ ແຜນຄວາມຕ້ອງການປັດໄຈການຜະລິດ, ຄາດຄະເນຜົນຜະລິດພືດພາຍໃນ ແລະ ສົ່ງອອກ ແລະ ສະໜັບສະໜູນໃຫ້ບັນດາໜ້າວຽກດັ່ງກ່າວ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ຢ່າງເປັນລະບົບ ແລະ ມີປະສິດທິຜົນສູງ;
4. ຄົ້ນຄວ້າ, ປະກອບຄຳເຫັນທາງດ້ານວິຊາການ ກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດດ້ານການປູກຝັງ ອະນຸມັດແຜນນຳເຂົ້າວັດຖຸອຸປະກອນຕ່າງໆ, ການຂໍສຳປະທານເນື້ອທີ່ດິນ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ, ການສະເໜີຂໍອະນຸມັດ ຫຼື ສືບຕໍ່ດຳເນີນທຸລະກິດ ທີ່ຕິດພັນກັບການລົງທຶນ

ດ້ານການປູກຝັງ ຂຶ້ນທະບຽນພື້ນທີ່ປູກພືດ ແລະ ຢັ້ງຢືນຮັບຮອງ ບົດວິພາກເສດຖະກິດ-ເຕັກນິກການປູກພືດເປັນສິນຄ້າ;

5. ຊຸກຍູ້ຜູ້ປະກອບການເຮັດການຜະລິດ ນໍາໃຊ້ເຕັກໂນໂລຊີ ແລະ ນະວັດຕະກໍາທັນສະໄໝ ດ້ານການປູກຝັງ ເພື່ອເພີ່ມຄວາມສາມາດໃນການແຂ່ງຂັນ ທາງດ້ານປະລິມານ, ຄຸນນະພາບ, ການຕະຫຼາດ ຕິດພັນກັບການປ່ຽນແປງດິນຟ້າອາກາດ ພ້ອມທັງກໍານົດ ຈຸດສຸມການຜະລິດພືດສະບຽງອາຫານ ແລະ ການຜະລິດພືດເປັນສິນຄ້າ;
6. ປະສານກັບພາກສ່ວນທີ່ກ່ຽວຂ້ອງ ລົງຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງການຜະລິດ ຂອງບັນດາຫົວໜ່ວຍທຸລະກິດການລົງທຶນດ້ານປູກຝັງ ເພື່ອຕີລາຄາ ປະເມີນຜົນການລົງທຶນດ້ານການປູກຝັງ, ພື້ນທີ່ການຜະລິດ, ຂຶ້ນບັນຊີແຜນການຜະລິດ ແລະ ຜົນຜະລິດພືດ ເພື່ອສະໜອງພາຍໃນປະເທດ, ຫຼຸດຜ່ອນການນໍາເຂົ້າ ແລະ ກໍານົດພືດສົ່ງອອກ;
7. ສົມທົບກັບພະແນກ, ສູນ ອ້ອມຂ້າງກົມປູກຝັງ ແລະ ຂະແໜງປູກຝັງ ປະຈໍານະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນການ ຄົ້ນຄວ້າ, ການກໍານົດ ມາດຕະຖານແນວພັນພືດ, ທົດສອບ, ວິໄຈ ແນວພັນ, ເມັດພັນພືດ ແລະ ເພື່ອຊຸກຍູ້, ຕິດຕາມ, ກວດກາ ຄຸນນະພາບແນວພັນ, ເມັດພັນພືດ ຢູ່ສະຖານທີ່ການຜະລິດ, ຮ້ານຄ້າຂາຍ, ສະຖານທີ່ເກັບຮັກສາ ເພື່ອເປັນການຂຶ້ນທະບຽນ ແລະ ຢັ້ງຢືນຄຸນນະພາບແນວພັນ, ເມັດພັນພືດ;
8. ກໍານົດໝາຍເຕັກນິກ ດ້ານການປູກຝັງ ຕາມທ່າແຮງຄວາມອາດສາມາດບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ;
9. ສ້າງຄວາມເຂັ້ມແຂງ ໃຫ້ແກ່ບຸກຄະລາກອນ ໃນການກວດກາຄຸນນະພາບ ການລົງທຶນດ້ານການປູກຝັງ, ຄຸນນະພາບແນວພັນ ແລະ ເມັດພັນພືດ ໃຫ້ມີຄວາມເຂັ້ມແຂງ;
10. ເປັນເຈົ້າການປະສານກັບພາກສ່ວນທີ່ກ່ຽວຂ້ອງ ລົງຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງການຜະລິດ ທົດສອບແນວພັນພືດ ເພື່ອຢັ້ງຢືນຄຸນນະພາບ ແລະ ປະສິດທິພາບ ຂອງແນວພັນພືດ ແລະ ທົດສອບແນວພັນພືດໃໝ່ ເພື່ອສະເໜີຂຶ້ນທະບຽນແນວພັນພືດ;
11. ຂຶ້ນທະບຽນແນວພັນ ແລະ ເມັດພັນພືດ, ພ້ອມທັງສ້າງຖານຂໍ້ມູນບັນຊີຜູ້ປະກອບການ ດ້ານແນວພັນ ແລະ ເມັດພັນພືດ;
12. ຄຸ້ມຄອງ, ກວດກາ ການນໍາເຂົ້າ, ຈໍາໜ່າຍ, ນໍາໃຊ້ ແລະ ໂຄສະນາ ກ່ຽວກັບ ແນວພັນ ແລະ ເມັດພັນພືດ ໃຫ້ເຂົ້າສູ່ລະບຽບການ;
13. ໂຄສະນາ, ເຜີຍແຜ່ ແລະ ວາງສະແດງພືດ, ຜະລິດຕະພັນ ຂອງບັນດາກຸ່ມຊາວກະສິກອນ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ;
14. ຄົ້ນຄວ້າ, ເກັບກໍາຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈໍາປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
15. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພະແນກລະບຽບການ ແລະ ຂຶ້ນທະບຽນປັດໄຈການຜະລິດ**

ພະແນກລະບຽບການ ແລະ ຂຶ້ນທະບຽນປັດໄຈການຜະລິດ ມີໜ້າທີ່ ດັ່ງນີ້:

1. ສຶກສາ, ຄົ້ນຄວ້າ ແລະ ນໍາສະເໜີນະໂຍບາຍ, ມາດຕະການສະໜັບສະໜູນ ການຜະລິດສະບຽງອາຫານ ແລະ ພືດເປັນສິນຄ້າ ທີ່ກ່ຽວຂ້ອງກັບຂະແໜງການປູກຝັງ;
2. ສຶກສາ, ຄົ້ນຄວ້າ, ສັງລວມ, ຊຸກຍູ້ຕິດຕາມການສ້າງ ແລະ ປັບປຸງ, ໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍ ກ່ຽວກັບວຽກງານປູກຝັງ ແລະ ຄວາມປອດໄພອາຫານ ພືດ ແລະ ຜະລິດຕະພັນພືດ 4

ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດກົດໝາຍ, ລະບຽບການທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ;

3. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາໂຮງງານຜະລິດຝຸ່ນ ແລະ ຢາປາບສັດຕູພືດ ແລະ ສ້າງແຜນຄວາມດຸ່ນດ່ຽງ ໃນຂອງເຂດທົ່ວປະເທດ;
4. ຄຸ້ມຄອງ, ກວດກາ ການນຳເຂົ້າ, ຈຳໜ່າຍ, ນຳໃຊ້ ແລະ ໂຄສະນາ ກ່ຽວກັບ ຝຸ່ນ ແລະ ຢາ ໃຫ້ເຂົ້າສູ່ລະບຽບການ;
5. ຄຸ້ມຄອງ, ກວດກາ, ກຳນົດມາດຕະຖານເຕັກນິກ, ມາດຕະຖານຝຸ່ນ ແລະ ຢາປາບສັດຕູພືດ;
6. ຄຸ້ມຄອງ, ຕິດຕາມ, ກວດກາ, ການບໍລິການ, ການຜະລິດຝຸ່ນ ແລະ ຢາປາບສັດຕູພືດ ຂອງໂຮງງານ, ຜູ້ປະກອບການ ແລະ ກຸ່ມຊາວກະສິກອນ;
7. ເປັນຈຸດປະສານງານ ແລະ ເສນາທິການໃຫ້ແກ່ ການເຂົ້າຮ່ວມໃນວຽກງານຄວາມປອດໄພອາຫານ ຂອງອົງການກົດລະຫັດອາຫານສາກົນ ແລະ ອົງການຄຸ້ມຄອງເຄມີສາກົນຕາມສົນທິສັນຍາ ສາກົນທີ່ ສປປ ລາວ ເປັນພາຄີ ເຊັ່ນ: ສົນທິສັນຍາຣອດເຕີດຳ, ສົນທິສັນຍາສະຕອກໂຮມ, ມົນເຕຣອານ ແລະ ບາເຊວ;
8. ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມ, ກວດກາປະເມີນຜົນການຄຸ້ມຄອງລະບຽບການ ຂອງຂະແໜງການປູກຝັງ ຂັ້ນສູນກາງ ແລະ ທ້ອງຖິ່ນ ພ້ອມທັງສະກັດກັ້ນ ແລະ ແກ້ໄຂຂໍ້ຂັດແຍ່ງການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກ່ຽວຂ້ອງກັບຂະແໜງປູກຝັງ;
9. ສ້າງ, ຂຶ້ນທະບຽນ ແລະ ຄຸ້ມຄອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດ, ຝຸ່ນ, ກຳນົດເຄື່ອງແບບ, ກາໝາຍຕາປະທັບຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;
10. ຄົ້ນຄ້ວານຳສະເໜີ ກ່ຽວກັບ ວຽກງານປູກຝັງ ພ້ອມທັງເປັນເຈົ້າການສະເໜີປະກອບສຳນວນຄະດີ ແລະ ລາຍງານການກະທຳຄວາມຜິດຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ;
11. ຂຶ້ນທະບຽນຝຸ່ນ, ຢາປາບສັດຕູພືດ, ທາດອາຫານເສີມພືດ ແລະ ສານປັບປຸງດິນ  ພ້ອມທັງສ້າງຖານຂໍ້ມູນບັນຊີຜູ້ປະກອບການ ທີ່ໄດ້ຂຶ້ນທະບຽນ;
12. ປະສານສົບທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າການດຳເນີນທຸລະກິດຈຳໜ່າຍ ແລະ  ອະນຸຍາດນຳເຂົ້າ, ສົ່ງອອກ, ສົ່ງຜ່ານຝຸ່ນ ແລະ ຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນ;
13. ເປັນຈຸດປະສານງານ ກ່ຽວກັບ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບແຈ້ງເຕືອນຄວາມສ່ຽງ ດ້ານຄວາມປອດໄພທາງດ້ານອາຫານ ແລະ ກຳນົດມາດຕະການແກ້ໄຂ;
14. ວາງແຜນ ແລະ ສຳຫຼວດຫາຄວາມສ່ຽງ ກ່ຽວກັບ ຄວາມປອດໄພຂອງອາຫານທີ່ເປັນພືດນຳເຂົ້າ ແລະ ຜະລິດພາຍໃນ ສປປ ລາວ ພ້ອມທັງຄົ້ນຄວ້າຫາມາດຕະການຫຼຸດຜ່ອນຄວາມສ່ຽງ; ຄົ້ນຄວ້າເນື້ອໃນການສື່ສານ ກ່ຽວກັບ ຄວາມສ່ຽງ ແລະ ເຜີຍແຜ່ຂໍ້ມູນຂ່າວສານດ້ານຄວາມອັນຕະລາຍທີ່ເກີດຂຶ້ນຕໍ່ຄວາມປອດໄພອາຫານທີ່ເປັນພືດ;
15. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການກວດກາ ແລະ ຢັ້ງຢືນຄວາມປອດໄພອາຫານ ທີ່ເປັນພືດ ທີ່ຈຳໜ່າຍ ແລະ ປຸງແຕ່ງ ໃນຂອບເຂດທົ່ວປະເທດ ແລະ ກວດກາຄວາມສອດຄ່ອງ ໃນການຄຸ້ມຄອງຄວາມປອດໄພອາຫານທີ່ເປັນພືດ ຂອງປະເທດສົ່ງອອກ; ປະຕິບັດການຕອບໂຕ້ ກໍລະນີອາຫານບໍ່ປອດໄພ ໂດຍປະສານສົບທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກວດກາຄືນສາເຫດ, ບັນຫາ ແລະ ຕິດຕາມການປະຕິ ບັດມາດຕະການແກ້ໄຂ;
16. ພັດທະນາລະບົບການກວດສອບການເຄື່ອນໄຫວວຽກງານ ການຢັ້ງຢືນຄວາມປອດໄພອາຫານ ແລະ ຂຶ້ນທະບຽນຜະລິດຕະພັນ, ການເຄື່ອນໄຫວ ຂອງນັກກວດກາໃນຂອບເຂດທົ່ວປະເທດ;

17. ຄົ້ນຄວ້າ ແລະ ປັບປຸງ ບັນຊີຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນວິຊາການອະນຸຍາດໃຫ້ນຳໃຊ້ ແລະ ຫ້າມນຳໃຊ້, ບັນຊີພືດຕົກຄ້າງຢາປາບສັດຕູພືດເປັນແຕ່ລະໄລຍະ ພ້ອມທັງແຈ້ງໃຫ້ແກ່ປະເທດທີ່ ສປປ ລາວ ເຂົ້າເປັນພາຄີ ໃນສົນທິສັນຍາ, ອະນຸສັນຍາ ແລະ ສັນຍາສາກົນ;
18. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
19. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 11 ໜ້າທີ່ ຂອງພະແນກກັກກັນພືດ**

ພະແນກກັກກັນພືດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີ ສ້າງ, ປັບປຸງ ແຜນງານ, ຍຸດທະສາດ, ໂຄງການ, ນິຕິກຳລຸ່ມກົດໝາຍ, ແຈ້ງການ ແລະ ບົດແນະນຳ, ຄູ່ມືວິຊາການດ້ານກັກກັນພືດ, ເຈລະຈາເຕັກນິກເປີດຕະຫຼາດ ແລະ ສຸຂະພາບພືດ ໃນແຕ່ລະໄລຍະ;
2. ຄົ້ນຄວ້າ ແລະ ສະເໜີ ສ້າງ, ປັບປຸງ ເງື່ອນໄຂ ແລະ ມາດຕະການສຸຂານາໄມພືດ, ບັນຊີສັດຕູພືດຄວບຄຸມ ແລະ ບັນຊີພືດຄວບຄຸມ ສຳລັບການນຳເຂົ້າ ເພື່ອໃຫ້ ສອດຄ່ອງຕາມມາດຕະຖານສາກົນ;
3. ຄົ້ນຄວ້າ, ສັງລວມມາດຕະຖານເງື່ອນໄຂ, ດ້ານເຕັກນິກ ແລະ ຄຸນນະພາບສິນຄ້າກະສິກຳ ທີ່ມີສັນຍາວ່າດ້ວຍສຸຂານາໄມ ແລະ ສຸຂານາໄມພືດ (SPS) ແລ້ວ, ປະສານ ແລະ ເຈລະຈາເຕັກນິກເປີດຕະຫຼາດ ສຳລັບສົ່ງອອກ, ສົ່ງອອກຕໍ່ ພືດ ແລະ ຜະລິດຕະພັນພືດກັບປະເທດຄູ່ຄ້າ ຕາມມາດຕະຖານສາກົນ ທີ່ ສປປ ລາວ ເປັນພາຄີ;
4. ຄຸ້ມຄອງ, ກວດກາ, ປະເມີນຜົນ ແລະ ພັດທະນາ ການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ, ການນຳເຂົ້າ, ສົ່ງອອກຕໍ່ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແລະ ໃບອະນຸຍາດດຳເນີນທຸລະກິດສຸຂານາໄມພືດ ພ້ອມທັງສ້າງຖານຂໍ້ມູນສຸຂານາໄມພືດ;
5. ຄຸ້ມຄອງ, ກວດກາ, ປະເມີນຜົນ ແລະ ພັດທະນາດ່ານກັກກັນພືດ, ສະຖານີກັກກັນພືດ ປະຈຳພາກເໜືອ ກາງ ແລະ ໃຕ້ ເພື່ອກັກແຍກປ່ຽວ, ທົດສອບ, ບຳບັດ, ສົ່ງກັບຄືນປະເທດຕົ້ນທາງ ຫຼື ທຳລາຍຖິ້ມ;
6. ຄຸ້ມຄອງ, ກວດກາ, ຢັ້ງຢືນສຸຂານາໄມພືດ ໃນການນຳເຂົ້າ, ສົ່ງອອກ ພືດ ແລະ ຜະລິດຕະພັນພືດ, ປັດໄຈການຜະລິດ (ຝຸ່ນ, ຢາປາບສັດຕູພືດ, ແນວພັນພືດ) ແລະ ເອື້ອອຳນວຍຄວາມສະດວກໃນການສົ່ງຜ່ານສິນຄ້າພືດ ຈາກປະເທດຕົ້ນທາງຫາປະເທດປາຍທາງ ຕາມກົດໝາຍ ແລະ ລະບຽບການ;
7. ຕິດຕັ້ງ, ປັບປຸງ, ຕິດຕາມ ແລະ ຄຸ້ມຄອງ ການນຳໃຊ້ລະບົບໂປຣແກມການອອກໃບຢັ້ງຢືນສຸຂານາໄມພືດ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂດ້ານສຸຂານາໄມພືດຂອງປະເທດປາຍທາງ;
8. ປະສານກັບຂະແໜງປູກຝັງແຂວງ, ນະຄອນ, ນະຄອນຫຼວງ ເພື່ອຄົ້ນຄວ້າ ແລະ ນຳສະເໜີການແຕ່ງຕັ້ງ ແລະ ຍົກຍ້າຍເຈົ້າໜ້າທີ່ກັກກັນພືດ ປະຈຳດ່ານກັກກັນພືດສາກົນໃນຂອບເຂດທົ່ວປະເທດ;
9. ເກັບກຳ ແລະ ສັງລວມຂໍ້ມູນ ການປະເມີນຄວາມສ່ຽງສັດຕູພືດ (PRA) ສຳລັບການເຈລະຈາເຕັກນິກດ້ານສຸຂານາໄມພືດ ເພື່ອເປີດຕະຫຼາດໃຫ້ປະເທດປະເທດຄູ່ຄ້າ;
10. ກວດກາ, ປະເມີນຜົນ ແລະ ຂຶ້ນທະບຽນ, ສະຖານທີ່ປະກອບການຜະລິດ, ສະຖານທີ່ຫຸ້ມຫໍ່ຜະລິດຕະພັນ ສຳລັບການສົ່ງອອກ ພືດ ແລະ ຜະລິດຕະພັນພືດ;
11. ຄຸ້ມຄອງ, ຂຶ້ນທະບຽນ ແລະ ກຳນົດມາດຕະຖານເຕັກນິກດ້ານສຸຂານາໄມພືດ ສຳລັບການດຳເນີນທຸລະກິດການປ້ອງກັນ ແລະ ກັກກັນພືດ;

12. ເກັບກຳ ແລະ ສັງລວມ ການນຳເຂົ້າ, ສົ່ງຜ່ານ, ສົ່ງອອກ, ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແລະ ປັດໄຈການຜະລິດ ພ້ອມທັງ ສ້າງ ແລະ ພັດທະນາຖານຂໍ້ມູນ ດັ່ງກ່າວ;

13. ຊຸກຍູ້, ຕິດຕາມ, ປະເມີນຜົນ, ປັບປຸງ, ພັດທະນາ ແລະ ສ້າງຄວາມເຂັ້ມແຂງດ້ານວິຊາການ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານກັກກັນພືດ, ດ່ານກັກກັນພືດ, ເຈົ້າໜ້າທີ່ປະຈຳດ່ານກັກກັນພືດ ແລະ ເຈລະຈາເຕັກນິກເປີດຕະຫຼາດ;

14. ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານໂລຈິສສະຕິກ ຂອງພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ;

15. ຄົ້ນຄວ້າ, ເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດພັນທະສາກົນ ທີ່ ສປປ ລາວ ເປັນພາຄີ ເຊັ່ນ: ສົນທິສັນຍາປ້ອງກັນພືດ ຂອງພາກພື້ນ ແລະ ສາກົນ, ສັນຍາວ່າດ້ວຍສຸຂານາໄມ ແລະ ສຸຂານາໄມ ພືດໃນແຕ່ລະໄລຍະ ເປັນຕົ້ນວຽກງານສຸຂານາໄມພືດ ຫຼື ສຸຂາພາບພືດ ແລະ ມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ຂອງອາຊຽນ, ອີງການປ້ອງກັນພືດພາກພື້ນ ແລະ ສາກົນ;

16. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;

17. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງພະແນກມາດຕະຖານ ແລະ ການຢັ້ງຢືນ**

ພະແນກມາດຕະຖານ ແລະ ການຢັ້ງຢືນ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ພັດທະນາ ແລະ ນຳສະເໜີ ແຜນຍຸດທະສາດ, ແຜນງານ ແລະ ໂຄງການ ກ່ຽວກັບການພັດທະນາກະສິກຳສະອາດ ເປັນຕົ້ນ ແມ່ນມາດຕະຖານການຜະລິດ ກະສິກຳອິນຊີ ແລະ ກະສິກຳທີ່ດີ, ມາດຕະຖານສະເພາະພືດ, ມາດຕະຖານສິນຄ້າພືດ ແລະ ມາດຕະຖານອື່ນ ທີ່ຕິດພັນກັບວຽກງານປູກຝັງ, ການຮັບຮອງລະບົບຢັ້ງຢືນ ແລະ ການອອກໃບຢັ້ງຢືນ ໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;

2. ຄົ້ນຄວ້າ ແລະ ພັດທະນາ ລະບຽບການ ແລະ ກົນໄກ ໃນການຄຸ້ມຄອງ ແລະ ການອອກໃບຮັບຮອງດ້ານວິຊາການ ໃຫ້ແກ່ຫົວໜ່ວຍທຸລະກິດ ທີ່ດຳເນີນກິດຈະການດ້ານການກວດກາ ແລະ ອອກໃບຢັ້ງຢືນຕາມມາດຕະຖານການຜະລິດ ກະສິກຳອິນຊີ ແລະ ກະສິກຳທີ່ດີ, ມາດຕະຖານສະເພາະພືດ, ມາດຕະຖານສິນຄ້າພືດ ແລະ ມາດຕະຖານອື່ນ ທີ່ຕິດພັນກັບວຽກງານປູກຝັງ ຢູ່ ສປປ ລາວ;

3. ພັດທະນາ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານສ້າງມາດຕະຖານ, ການກວດກາ ແລະ ຢັ້ງຢືນມາດຕະຖານການຜະລິດ ກະສິກຳອິນຊີ ແລະ ກະສິກຳທີ່ດີ, ມາດຕະຖານສະເພາະພືດ, ມາດຕະຖານສິນຄ້າພືດ ແລະ ມາດຕະຖານອື່ນ ທີ່ຕິດພັນກັບວຽກງານປູກຝັງ ຢູ່ ສປປ ລາວ ພ້ອມທັງການຮັບຮອງລະບົບມາດຕະຖານ ດັ່ງກ່າວ;

4. ສ້າງ ແລະ ພັດທະນາ ມາດຕະຖານສິນຄ້າພືດຂອງລາວໃຫ້ສອດຄ່ອງກັບມາດຕະຖານສິນຄ້າພືດ ຂອງພາກພື້ນ ແລະ ສາກົນ;

5. ສຶກສາ, ຄົ້ນຄວ້າ, ວາງແຜນ ແລະ ກຳນົດ ຈຸດສຸມການຜະລິດກະສິກຳສະອາດ ຕາມເງື່ອນໄຂທີ່ເໝາະສົມ ໃນຂອບເຂດທົ່ວປະເທດ;

6. ດຳເນີນການກວດກາ ແລະ ອອກໃບຢັ້ງຢືນ ມາດຕະຖານການຜະລິດ ກະສິກຳອິນຊີ ແລະ ກະສິກຳທີ່ດີ, ມາດຕະຖານສະເພາະພືດ, ມາດຕະຖານສິນຄ້າພືດ ແລະ ມາດຕະຖານອື່ນ ທີ່ຕິດພັນກັບວຽກງານປູກຝັງ;

7. ດຳເນີນການກວດກາ ແລະ ອອກໃບຢັ້ງຢືນ ຫົວໜ່ວຍທຸລະກິດ ທີ່ດຳເນີນກິດຈະການ ດ້ານກວດກາ ແລະ ຢັ້ງຢືນມາດຕະຖານການຜະລິດ ກະສິກຳອິນຊີ, ກະສິກຳທີ່ດີ, ມາດຕະຖານສະເພາະພືດ ແລະ ມາດຕະຖານສິນຄ້າພືດ ແລະ ມາດຕະຖານອື່ນ ທີ່ຕິດພັນກັບວຽກງານປູກຝັງ ພ້ອມທັງຮັບຮອງລະບົບມາດຕະຖານ ດັ່ງກ່າວ;
8. ປະສານສົມທົບກັບການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ໃນການສຶກສາ, ຄົ້ນຄວ້າ, ປະເມີນຂໍ້ກຳນົດເງື່ອນໄຂ ແລະ ຂໍ້ມູນດ້ານວິຊາການ ເພື່ອພັດທະນາມາດຕະຖານ, ການກວດກາ ແລະ ການຢັ້ງຢືນມາດຕະຖານການຜະລິດ ກະສິກຳອິນຊີ, ກະສິກຳທີ່ດີ, ມາດຕະຖານສະເພາະພືດ ແລະ ມາດຕະຖານສິນຄ້າພືດ ໃຫ້ສອດຄ່ອງກັບມາດຕະຖານ ຂອງພາກພື້ນ ແລະ ສາກົນ ແນໃສ່ການສະໜັບສະໜູນຄວາມປອດໄພຂອງຜົນຜະລິດ, ການເຈລະຈາ ແລະ ການເຂົ້າເຖິງຕະຫຼາດ;
9. ພັດທະນາຄູ່ມື, ຫຼັກສູດ, ຈັດຝຶກອົບຮົມ, ເຜີຍແຜ່ ແລະ ໂຄສະນາ ກ່ຽວກັບ ມາດຕະຖານ ແລະ ລະບົບການຢັ້ງຢືນມາດຕະຖານການຜະລິດ ກະສິກຳອິນຊີ ແລະ ກະສິກຳທີ່ດີ, ມາດຕະຖານສະເພາະພືດ ແລະ ມາດຕະຖານສິນຄ້າພືດ ແລະ ມາດຕະຖານອື່ນ ທີ່ຕິດພັນກັບວຽກງານປູກຝັງ;
10. ເປັນກອງເລຂາ ໃຫ້ແກ່ຄະນະກຳມະການຄຸ້ມຄອງຄຸນນະພາບ ແລະ ຢັ້ງຢືນມາດຕະຖານກະສິກຳສະອາດ ຄະນະກຳມະການພິຈາລະນາອອກໃບຢັ້ງຢືນ ແລະ ຄະນະກຳມະການອື່ນໆ ຕາມຂໍ້ຕົກລົງຂອງ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ກົມປູກຝັງ ພາຍໃຕ້ເງື່ອນໄຂມາດຕະຖານສາກົນ ໄອເອັສໂອ/ໄອອີຊີ 17065;
11. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງພະແນກຄຸ້ມຄອງການປຸງແຕ່ງພືດ**

ພະແນກຄຸ້ມຄອງການປຸງແຕ່ງພືດ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາ ກ່ຽວກັບວຽກງານຄຸ້ມຄອງປຸງແຕ່ງພືດ ແລະ ກົນຈັກກະສິກຳ;
2. ຄົ້ນຄວ້າ, ກຳນົດນະໂຍບາຍ, ມາດຕະຖານ, ເຕັກນິກໂຮງງານ ແລະ ການປຸງແຕ່ງ ເຂົ້າ, ສາລີ, ມັນຕົ້ນ, ອ້ອຍ ແລະ ໂຮງງານການປຸງແຕ່ງພືດອື່ນໆ, ຂະບວນການຜະລິດ, ການນຳໃຊ້ເຄື່ອງມື ແລະ ກົນຈັກກະສິກຳ ໂດຍປະຕິບັດຕາມມາດຕະຖານທີ່ກຳນົດ;
3. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານປຸງແຕ່ງພືດຂັ້ນຕົ້ນ ເປັນຕົ້ນ ໂຮງສີເຂົ້າ, ໂຮງງານປຸງແຕ່ງແປ້ງມັນຕົ້ນ, ໂຮງງານປຸງແຕ່ງອ້ອຍ, ຜະລິດຕະພັນພືດອື່ນໆ, ກົນຈັກ ແລະ ເຄື່ອງມືຮັບໃຊ້ການປູກຝັງ, ກຳນົດແຜນການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ຢ່າງກົມກຽວ;
4. ຄຸ້ມຄອງ, ກວດກາມາດຕະຖານໂຮງງານ, ລະບົບເຕັກນິກ-ເຕັກໂນໂລຊີ, ມາດຕະຖານການປຸງແຕ່ງທີ່ດີ, ສຸຂານາໄມ ແລະ ຄວາມປອດໄພໃນການປຸງແຕ່ງ, ການຫຸ້ມຫໍ່ ແລະ ອື່ນໆ ຢູ່ໃນໂຮງງານປຸງແຕ່ງພືດ;
5. ສຶກສາ, ສ້າງ ແລະ ພັດທະນາປັບປຸງ ບັນດານິຕິກຳ, ຄູ່ມືດ້ານວິຊາການ, ຫຼັກສູດ ແລະ ຈັດການຝຶກອົບຮົມ ກ່ຽວກັບວຽກງານຄຸ້ມຄອງວຽກງານ ການປຸງແຕ່ງພືດ ແລະ ກົນຈັກກະສິກຳ, ວິທະຍາການຫຼັງ

ການເກັບກ່ຽວ ແລະ ການນຳໃຊ້ເຄື່ອງມືກົນຈັກກະສິກຳ ໃຫ້ແກ່ວິຊາການຂັ້ນ ແຂວງ, ເມືອງ ແລະ ຜູ້ປະກອບການ ກິດຈະການໂຮງງານປຸງແຕ່ງພືດ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ;

6. ເຜີຍແຜ່ ບັນດານິຕິກຳ, ເງື່ອນໄຂ, ຂໍ້ກຳນົດ ແລະ ຄູ່ມືຕ່າງໆ ວຽກງານປຸງແຕ່ງພືດ ແລະ ກົນຈັກກະສິກຳ;
7. ຄົ້ນຄວ້າ ມາດຕະຖານ-ເຕັກນິກ, ຂຶ້ນທະບຽນ ໂຮງງານປຸງແຕ່ງພືດ, ກົນຈັກ ແລະ ເຄື່ອງມືຮັບໃຊ້ ການຜະລິດກະສິກຳ, ການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ແລະ ຜະລິດເຄື່ອງມື ແລະ ກົນຈັກ;
8. ຄົ້ນຄວ້າ ການຂໍອະນຸຍາດນຳເຂົ້າ, ຈຳໜ່າຍ ກົນຈັກ, ອາໄຫຼ່ກົນຈັກ ແລະ ເຄື່ອງມືຮັບໃຊ້ເຂົ້າການຜະລິດພືດ ໃຫ້ຖືກຕ້ອງຕາມລະບຽບການ;
9. ຄົ້ນຄວ້າ ແລະ ນຳສະເໜີ ອອກ ຫຼື ຖອນ ໃບຢັ້ງຢືນການຜະລິດທີ່ດີ (GMP), ໃບຢັ້ງຢືນການຜະລິດສຸຂານາໄມ ແລະ ຄວາມປອດໄພ (GHP), ໃບຢັ້ງຢືນຜະລິດຕະພັນ ແລະ ຄຸນນະພາບຜະລິດຕະພັນ, ລະບົບວິເຄາະ ແລະ ຄວບຄຸມຈຸດອັນຕະລາຍ (HACCP) ແລະ ມາດຕະຖານອື່ນທີ່ກ່ຽວຂ້ອງ ໃຫ້ແກ່ຜູ້ປະກອບການ;
10. ຄົ້ນຄວ້າ, ກຳນົດ ແລະ ຄິດໄລ່ໂຄງປະກອບລາຄາຕົ້ນທຶນການຜະລິດ ຕໍ່ໜຶ່ງຜະລິດຕະພັນ ຂອງໂຮງງານປຸງແຕ່ງພືດ;
11. ປັບປຸງ, ຊຸກຍູ້ ລະບົບຕ່ອງໂສ້ການຜະລິດ ຕິດພັນກັບການປຸງແຕ່ງພືດ ແລະ ຜະລິດຕະພັນພືດ ພາຍໃນທ້ອງຖິ່ນ ເພື່ອສ້າງມູນຄ່າເພີ່ມ ແລະ ຫຼຸດຜ່ອນຕົ້ນທຶນການຜະລິດ;
12. ໃຫ້ການປຶກສາ, ແນະນຳ, ຊຸກຍູ້, ສະໜັບສະໜູນ ຜູ້ຜະລິດ, ບໍລິສັດ, ຜູ້ປະກອບການ ກ່ຽວກັບວຽກງານປຸງແຕ່ງພືດ ແລະ ການນຳໃຊ້ເຄື່ອງມືກົນຈັກກະສິກຳ;
13. ສຳຫຼວດ, ເກັບກຳຂໍ້ມູນ ບັນດາໂຮງງານປຸງແຕ່ງພືດ ແລະ ຜະລິດພືດ, ກົນຈັກກະສິກຳ ຮັບໃຊ້ໃນການຜະລິດພືດ ຢູ່ໃນຂອບເຂດທົ່ວປະເທດ;
14. ຮ່ວມມືກັບມະຫາວິທະຍາໄລແຫ່ງຊາດ ສາຂາກະເສດສາດ, ວິທະຍາໄລກະສິກຳ ແລະ ປ່າໄມ້, ວິສາວະກຳກົນຈັກ ເພື່ອພັດທະນາວຽກງານປຸງແຕ່ງ, ວິທະຍາການຫຼັງການເກັບກ່ຽວ ແລະ ການນຳໃຊ້ເຄື່ອງມືກົນຈັກກະສິກຳ;
15. ເຂົ້າຮ່ວມກອງປະຊຸມສຳມະນາ ແລະ ຝຶກອົບຮົມວິຊາການ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງການປຸງແຕ່ງພືດ ແລະ ກົນຈັກກະສິກຳ;
16. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
17. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງສູນປ້ອງກັນພືດ**

ສູນປ້ອງກັນພືດ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງພັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາ ກ່ຽວກັບ ວຽກງານປ້ອງກັນພືດ;

2. ສ້າງ ແລະ ພັດທະນາ ຕາໜ່າງປ້ອງກັນພືດ ແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍສະເພາະ ຄລີນິກພືດ ຫຼື ໝໍພືດ ປະຈຳບ້ານ ເພື່ອຕິດຕາມ, ເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມການລະບາດຂອງສັດຕູພືດ;
3. ຄົ້ນຄວ້າ, ສ້າງ ແລະ ປັບປຸງພື້ນຖານໂຄງລ່າງ ດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການວິໄຈ, ຢັ້ງຢືນປັດໄຈການຜະລິດ (ຝຸ່ນ, ແນວພັນ ແລະ ຢາປາບສັດຕູພືດ) ຮັບໃຊ້ພາຍໃນ, ການນຳເຂົ້າ ແລະ ສຳລັບສົ່ງອອກ;
4. ພັດທະນາ ເຕັກນິກວິທີການປ້ອງກັນພືດແບບປະສົມປະສານ ໂດຍສະເພາະການນຳໃຊ້ຊີວະວິທະຍາ, ສະໝູນໄພ, ການນຳໃຊ້ຢາປາບສັດຕູພືດທີ່ຖືກວິທີ, ເຕັກນິກການບຳບັດ ຫຼື ກຳຈັດ ສັດຕູພືດ ດ້ວຍການຣົມຢາ;
5. ສຳຫຼວດ, ວິໄຈ, ເກັບຮັກສາຕົວຢ່າງ, ຕິດຕາມ, ເຝົ້າລະວັງ ແລະ ພະຍາກອນ ການລະບາດຂອງສັດຕູພືດ ລາຍງານສະພາບສັດຕູພືດ, ອອກແຈ້ງການ, ໃຫ້ຄຳແນະນຳ ດ້ານເຕັກນິກ-ການປ້ອງກັນ ແລະ ຄວບຄຸມ ສັດຕູພືດ ໃນແຕ່ລະຊ່ວງລະດູການຜະລິດ ຂອງແຕ່ລະເຂດ ໃນຂອບເຂດທົ່ວປະເທດ;
6. ສ້າງ ແລະ ພັດທະນາ ຄູ່ມື ເຕັກນິກປ້ອງກັນພືດ, ການວິໄຈ ແລະ ການທົດສອບ ພ້ອມທັງ ບໍລິການ ແລະ ໃຫ້ຄຳປຶກສາ ດ້ານວຽກງານປ້ອງກັນພືດ, ການທົດສອບ ແລະ ວິໄຈ ແນວພັນພືດ, ຝຸ່ນ, ຢາປາບສັດຕູພືດ ແລະ ຄຸນຄ່າທາງໂພສະນາການໃນພືດ ເພື່ອຮັບປະກັນ ໃຫ້ແກ່ການສົ່ງອອກພືດ ໄປຍັງປະເທດຄູ່ຄ້າ;
7. ເຜີຍແຜ່ ຂໍ້ມູນຂ່າວສານ ແລະ ຖ່າຍທອດເຕັກນິກວິຊາການປ້ອງກັນພືດ ໃຫ້ແກ່ວິຊາການຂັ້ນແຂວງ, ຂັ້ນເມືອງ, ຊາວກະສິກອນ ແລະ ຜູ້ປະກອບການ ໂດຍການຈັດ ແລະ ເຂົ້າຮ່ວມປະຊຸມ, ສຳມະນາ ຢູ່ພາຍໃນ, ພາກພື້ນ ແລະ ສາກົນ;
8. ກຳນົດມາດຕະການດຳເນີນການປ້ອງກັນ, ຄວບຄຸມ ແລະ ກຳຈັດ ສັດຕູພືດ ຫຼື ຫາວິທີການແກ້ໄຂດ້ານວິຊາການທີ່ເໝາະສົມ ໃນກໍລະນີເກີດການຕິດແປດພະຍາດ ຫຼື ແຜ່ລະບາດ ຂອງສັດຕູພືດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ຮ່ວມມືກັບອຳນາດການປົກຄອງທ້ອງຖິ່ນ ໃນການປະຕິບັດມາດຕະການ ດັ່ງກ່າວ;
9. ສຳຫຼວດ, ສ້າງ ແລະ ປັບປຸງ ບັນຊີສັດຕູພືດ, ບັນຊີສັດຕູພືດທີ່ມີຄວາມສ່ຽງ ເພື່ອເປັນຂໍ້ມູນພື້ນຖານດ້ານວິຊາການ ໃນການຄົ້ນຄວ້າວິທີການປ້ອງກັນ-ກຳຈັດ, ພ້ອມທັງ ສະໜັບສະໜູນ ຂໍ້ມູນວິຊາການໃຫ້ແກ່ການເຈລະຈາເງື່ອນໄຂການສົ່ງອອກພືດ ແລະ ຜະລິດຕະພັນພືດ ກັບປະເທດຄູ່ຄ້າ;
10. ສຳຫຼວດ, ເກັບຕົວຢ່າງ, ທົດສອບ, ວິໄຈ, ຢັ້ງຢືນຄຸນນະພາບເມັດພັນພືດ, ຝຸ່ນ, ຢາປາບສັດຕູພືດ, ສານພິດຕົກຄ້າງຈາກຢາປາບສັດຕູພືດ, ເຊື້ອຈຸລິນຊີໃນພືດ, ສິ່ງເຈືອປົນໃນພືດ, ຜະລິດຕະພັນພືດທີ່ຜະລິດ, ຈຳໜ່າຍ, ສົ່ງອອກ-ນຳເຂົ້າ ຈາກຕ່າງປະເທດ ໃຫ້ໄດ້ມາດຕະຖານ ເພື່ອໃຫ້ສອດຄ່ອງກັບມາດຕະຖານ ຂອງພາກພື້ນ ແລະ ສາກົນ;
11. ປະສານຮ່ວມມື ກັບອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາຫ້ອງວິໄຈຢາປາບສັດຕູພືດ, ຝຸ່ນ, ແນວພັນພືດ ແລະ ສັດຕູພືດ ໃຫ້ໄດ້ມາດຕະຖານສາກົນ ເປັນຕົ້ນແມ່ນ ເຕັກນິກການວິໄຈ, ລະບົບການຈັດການເອກະສານ, ບຸກຄະລາກອນ, ພື້ນຖານໂຄງລ່າງ ແລະ ວັດຖຸອຸປະກອນ;
12. ທົດສອບ ແລະ ຢັ້ງຢືນ ສານພິດຕົກຄ້າງຈາກຢາປາບສັດຕູພືດ ເພື່ອກຳນົດຄ່າ MRL ໃນພືດ ຂອງ ສປປ ລາວ ໃນພາກສະໜາມ;

13. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງສູນ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
14. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງ ຂັ້ນເທິງ.

**ມາດຕາ 15 ໜ້າທີ່ ຂອງສູນກະສິກຳສະອາດ**

ສູນກະສິກຳສະອາດ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງ ຜັນຂະຫຍາຍ ກົດໝາຍ, ດຳລັດ, ນະໂຍບາຍ, ແຜນພັດທະນາ, ຍຸດທະນາສາດ ຂອງກົມປູກຝັງ ໃຫ້ເປັນແຜນງານ ແລະ ໂຄງການກະສິກຳສະອາດເປັນອັນລະອຽດ;
2. ພັດທະນາ, ປັບປຸງ ພື້ນຖານໂຄງລ່າງ ແລະ ເຕັກໂນໂລຊີ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳສະອາດ;
3. ບໍລິການໃຫ້ຄຳປຶກສາ, ສ້າງບຸກຄະລາກອນ ແລະ ຈັດຝຶກອົບຮົມຄູຝຶກໃຫ້ແກ່ພະນັກງານ ຂັ້ນແຂວງ, ເມືອງ, ຫົວໜ່ວຍທຸລະກິດ, ກຸ່ມຜູ້ຜະລິດ, ຜູ້ປະກອບການໃນຂອບເຂດທົ່ວປະເທດ ໃຫ້ໄປຕາມເຕັກນິກການຜະລິດມາດຕະຖານກະສິກຳອິນຊີ, ມາດຕະຖານກະສິກຳທີ່ດີ, ວິທະຍາການຫຼັງການເກັບກ່ຽວ ແລະ ລະບົບຄວບຄຸມການຜະລິດພາຍໃນ;
4. ສ້າງສວນຕົວແບບໃນການສາທິດ ເຕັກນິກການຜະລິດພືດ ຕາມມາດຕະຖານກະກະສິກຳອິນຊີ ແລະ ກະສິກຳທີ່ດີ ເພື່ອເປັນບ່ອນທັດສະນະສຶກສາແລກປ່ຽນບົດຮຽນ ດ້ານກະສິກຳສະອາດ ຂອງ ສປປ ລາວ;
5. ສຶກສາເຕັກນິກ, ສ້າງ ແລະ ພັດທະນາເຕັກນິກການຜະລິດ, ຄູ່ມື, ຫຼັກສູດຝຶກອົບຮົມ ກ່ຽວກັບການຜະລິດຕາມມາດຕະຖານກະສິກຳອິນຊີ, ມາດຕະຖານກະສິກຳທີ່ດີ, ວິທະຍາການຫຼັງການເກັບກ່ຽວ ແລະ ປຸງແຕ່ງກະສິກຳສະອາດ, ມາດຕະຖານການຜະລິດສະເພາະພືດ, ມາດຕະຖານສິນຄ້າພືດ, ມາດຕະຖານດ້ານຄຸນນະພາບ, ຄວາມປອດໄພຂອງຜົນຜະລິດພືດ, ພັດທະນານະວັດຕະກຳກະສິກຳທີ່ຕິດພັນກັບສະພາບການປ່ຽນ ແປງດິນຟ້າອາກາດ ແລະ ກົນຈັກກະສິກຳ;
6. ທົດສອບ ແລະ ວິໄຈ ທາງດ້ານວິທະຍາສາດ ກ່ຽວກັບແນວພັນພືດການຕັດແຕ່ງທຸກຳ (GMO), ການຈັດຫ້ອງວິໄຈທີ່ດີ (Good Laboratory Practice-GLP) ແລະ ຢັ້ງຢືນການປົນເປື້ອນ ເຊື້ອຈຸລິນຊີໂລຫະໜັກ ແລະ ສານເຄມີຕົກຄ້າງສູງສຸດ (Maximum Residual Limiteds-MRLs) ຂອງພືດ ແລະ ຜະລິດຕະພັນພືດ ໃຫ້ໄປຕາມເງື່ອນໄຂກະສິກຳສະອາດ;
7. ສ້າງລະບຽບການຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມວຽກງານການຕະຫຼາດກະສິກຳສະອາດ ໃນທຸກຂອດການຜະລິດໃຫ້ໄປຕາມລະບົບ, ເພີ່ມມູນຄ່າການຜະລິດຕາມເງື່ອນໄຂກະສິກຳສະອາດ ແລະ ຈັດງານວາງສະແດງສິນຄ້າກະສິກຳສະອາດ;
8. ບໍລິການທົດສອບປັດໄຈການຜະລິດໃນເງື່ອນໄຂກະສິກຳສະອາດ (ແນວພັນພືດ, ຝຸ່ນ, ຢາປາບສັດ ຕູພືດ) ແລະ ທົດສອບແນວພັນພືດໃໝ່;
9. ຝຶກອົບຮົມ, ໃຫ້ຄຳແນະນຳການປະຕິບັດມາດຕະຖານຢູ່ໂຮງງານປຸງແຕ່ງ, ໂຮງຄັດແຍກ, ສະຖານ ທີ່ຫຸ້ມຫໍ່ ແລະ ໂຮງເຮືອນ, ສະຖານທີ່ປະກອບການຕ່າງໆ ໃຫ້ສອດຄ່ອງກັບມາດຕະຖານການປຸງແຕ່ງທີ່ດີ ເຊັ່ນ: Good Manufactura Practice (GMP); Hazard Analysis Critical Control Point (HACCP); Good Hygiene Practice (GHP);

10. ພັດທະນາ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ຫ້ອງວິໄຈພືດສະອາດ ໃຫ້ໄປຕາມມາດຕະຖານສາກົນ ISO/IEC 17025;
11. ສາທິດ ແລະ ທົດສອບການນຳໃຊ້ເຄື່ອງມືກົນຈັກກະສິກຳ ແລະ ພັດທະນານະວັດຕະກຳກະສິກຳທີ່ຕິດພັນກັບສະພາບການປ່ຽນແປງດິນຟ້າອາກາດໃຫ້ໄປຕາມລະບຽບ ແລະ ເງື່ອນໄຂທີ່ກຳນົດໄວ້;
12. ປະສານສົມທົບ ແລະ ຮ່ວມມືກັບຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ໂຄງການຕ່າງໆ, ສະຖາບັນການສຶກສາ, ມະຫາວິທະຍາໄລ, ວິທະຍາໄລກະສິກຳ ແລະ ປ່າໄມ້, ສູນບໍລິການເຕັກນິກ, ຈັດທັດສະນະສຶກສາ, ແລກປ່ຽນບົດຮຽນ ແລະ ແບ່ງປັນ ເຕັກນິກກະສິກຳສະອາດ ໃນຂອບເຂດທົ່ວປະເທດ;
13. ສ້າງຕາໜ່າງກະສິກຳສະອາດ ລົງສູ່ພື້ນຖານການຜະລິດໃນຂອບເຂດທົ່ວປະເທດ ແລະ ໂດຍສາມາດສອດຄ່ອງກັບພາກພື້ນ ແລະ ສາກົນ;
14. ໂຄສະນາ, ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບກະສິກຳສະອາດ ໃຫ້ແກ່ພະນັກງານຂັ້ນ ແຂວງ, ເມືອງກຸ່ມຜູ້ຜະລິດ, ຜູ້ປະກອບການ, ຜູ້ສົນໃຈ ແລະ ສັງຄົມທົ່ວໄປໃນຂອບເຂດທົ່ວປະເທດ;
15. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງສູນ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
16. ປະຕິບັດໜ້າທີ່ວຽກງານອື່ນໆ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 16 ຫຼັກການ

ກົມປູກຝັງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມ ຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ແລະ ພາລະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 17 ແບບແຜນວິທີເຮັດວຽກ

ກົມປູກຝັງ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ; 𝓊

3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການ ເປັນແຕ່ລະໄລຍະ;

4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງຕໍ່ ຄະນະປະຈຳພັກ, ຄະນະພັກ, ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງຕົນ, ຮອງຫົວໜ້າກົມ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍ ຂອງຫົວໜ້າກົມ;

5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດ ໃຫ້ຮອງຫົວໜ້າກົມ ທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກົມ ຊາບ ພາຍຫຼັງກັບມາປະຈຳການ;

6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;

7. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 18 ງົບປະມານ ແລະ ຕາປະທັບ**

ກົມປູກຝັງ ມີງົບປະມານ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 19 ການຈັດຕັ້ງປະຕິບັດ**

ກົມປູກຝັງ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຂະແໜງສາຍຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມປູກຝັງ ສະບັບເລກທີ 0078/ກປ, ວັນທີ 12 ມັງກອນ 2022.

**ລັດຖະມົນຕີ**

ປອ. ລິນຄຳ ດວງສະຫວັນ